**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ

ເລກທີ 283 /ລບ

ນະຄອນຫຼວງວຽງຈັນ, ວັນທີ 11.08.2022

# ດຳລັດ
# ວ່າດ້ວຍການສົ່ງເສີມອາຫານທ່ຽງໃນໂຮງຮຽນ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ການສຶກສາ ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ໜັງສືສະເໜີ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 6388/ສສກ, ລົງວັນທີ 08 ກໍລະກົດ 2022.

## ລັດຖະບານ ອອກດຳລັດ:
## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີຄວາມເປັນເອກະພາບ, ປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຊຸກຍູ້ ແລະ ສົ່ງເສີມໃຫ້ນັກຮຽນ ໃນສະຖານການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ໄດ້ຮັບອາຫານທ່ຽງທີ່ມີໂພຊະນາການທີ່ດີ, ມີການຈະເລີນເຕີບໂຕທາງດ້ານຮ່າງກາຍ, ມີການພັດທະນາທາງດ້ານສະຕິປັນຍາ ແລະ ເຂົ້າເຖິງການສຶກສາ ແລະ ກິລາ ທີ່ມີຄຸນນະພາບ ແລະ ເທົ່າທຽມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ການສົ່ງເສີມອາຫານທ່ຽງໃນໂຮງຮຽນ**

ການສົ່ງເສີມອາຫານທ່ຽງໃນໂຮງຮຽນ ແມ່ນ ການສະໜອງອາຫານ ທີ່ຖືກປຸງແຕ່ງຕາມຫຼັກໂພຊະນາການ ໃຫ້ນັກຮຽນ ໃນສະຖານການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໂພຊະນາການ** ໝາຍເຖິງ ການປຸງແຕ່ງອາຫານທີ່ໄດ້ມາດຕະຖານ, ສະອາດ, ປອດໄພ, ມີປະໂຫຍດຕໍ່ສຸຂະພາບ ແລະ ຄົບໝວດອາຫານ;

2. **ອາຫານທ່ຽງໃນໂຮງຮຽນ** ໝາຍເຖິງ ອາຫານທີ່ປຸງແຕ່ງ ໃນສະຖານການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ເພື່ອໃຫ້ນັກຮຽນໄດ້ກິນໃນຕອນທ່ຽງ;

3. ຄະນະພັດທະນາການສຶກສາຂັ້ນບ້ານ (ຄພສບ) ໝາຍເຖິງ ການຈັດຕັ້ງໜຶ່ງຂອງບ້ານ ທີ່ມີໜ້າທີ່ ຮັບຜິດຊອບໃນການພັດທະນາການສຶກສາພາຍໃນບ້ານ.

**ມາດຕາ 4 ຫຼັກການກ່ຽວກັບການສົ່ງເສີມອາຫານທ່ຽງໃນໂຮງຮຽນ**

ການສົ່ງເສີມອາຫານທ່ຽງໃນໂຮງຮຽນ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ແຜນພັດທະນາຂະແໜງການສຶກສາທິການ ແລະ ກິລາ ໃນແຕ່ລະໄລຍະ;

2. ຮັບປະກັນການຄຸ້ມຄອງຢ່າງລວມສູນ, ມີຈຸດສຸມ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

3. ຮັບປະກັນໃຫ້ນັກຮຽນ ໃນສະຖານການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ໄດ້ກິນອາຫານທ່ຽງ ທີ່ຖືກຕາມຫຼັກໂພຊະນາການ;

4. ຮັບປະກັນຄວາມສະເໝີພາບ, ເປີດເຜີຍ, ໂປ່ງໃສ ແລະ ສາມາດກວດສອບໄດ້;

5. ຮັບປະກັນການມີສ່ວນຮ່ວມ ຂອງຄອບຄົວ, ໂຮງຮຽນ, ບ້ານ, ຊຸມຊົນ ແລະ ສັງຄົມ.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ຢູ່ສະຖານການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ການສົ່ງເສີມອາຫານທ່ຽງໃນໂຮງຮຽນ ພາກລັດ ແລະ ເອກະຊົນ

**ມາດຕາ 6 ການສົ່ງເສີມອາຫານທ່ຽງໃນໂຮງຮຽນພາກລັດ**

ລັດ ເປັນຜູ້ສະໜອງງົບປະມານ ໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ຢູ່ສະຖານ ການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ພາກລັດ ທີ່ຢູ່ໃນເງື່ອນໄຂໄດ້ຮັບການສະໜອງງົບປະມານ.

ສຳລັບໂຮງຮຽນທີ່ບໍ່ຢູ່ໃນເງື່ອນໄຂໄດ້ຮັບງົບປະມານຂອງລັດ ພໍ່ແມ່ ຫຼື ຜູ້ປົກຄອງນັກຮຽນ ແລະ ຊຸມຊົນ ປະກອບສ່ວນທຶນຮອນ, ວັດຖຸ, ອຸປະກອນ, ແຮງງານ, ອາຫານ ແລະ ສິ່ງອື່ນ ເຂົ້າໃນວຽກງານສົ່ງເສີມອາຫານ ທ່ຽງໃນໂຮງຮຽນ ຕາມເງື່ອນໄຂຕົວຈິງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີສ່ວນຮ່ວມ ແລະ ປະກອບສ່ວນ ດ້ານທຶນຮອນ, ອາຫານ ແລະ ວັດຖຸປະກອນ ເຂົ້າໃນວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ.

**ມາດຕາ 7 ການສົ່ງເສີມອາຫານທ່ຽງໃນໂຮງຮຽນພາກເອກະຊົນ**

ຜູ້ປະກອບການສະຖານການສຶກສາພາກເອກະຊົນ ຕ້ອງເປັນເຈົ້າການ ໃນການສະໜອງອາຫານທ່ຽງໃນ ສະຖານການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາຂອງຕົນ ດ້ວຍຫຼາຍຮູບການ ຕາມຄວາມເໝາະສົມ ແລະ ຖືກຕ້ອງຕາມຫຼັກໂພຊະນາການ ໂດຍມີການສົມທົບກັບພໍ່ແມ່ ຫຼື ຜູ້ປົກຄອງນັກຮຽນ.

## ໝວດທີ 3
## ເງື່ອນໄຂ ແລະ ການຄັດເລືອກ

**ມາດຕາ 8 ເງື່ອນໄຂຂອງໂຮງຮຽນພາກລັດ ທີ່ຈະໄດ້ຮັບການສົ່ງເສີມອາຫານທ່ຽງ**

ໂຮງຮຽນພາກລັດ ທີ່ຈະໄດ້ຮັບການສົ່ງເສີມອາຫານທ່ຽງໃນໂຮງຮຽນ ມີເງື່ອນໄຂ ດັ່ງນີ້:

1. ໂຮງຮຽນ ທີ່ເຄີຍຈັດຕັ້ງປະຕິບັດໂຄງການອາຫານທ່ຽງໃນໂຮງຮຽນໃນໄລຍະຜ່ານມາ;

2. ໂຮງຮຽນ ທີ່ຢູ່ເຂດຊົນນະບົດ, ຫ່າງໄກສອກຫຼີກ, ເຂດຊົນເຜົ່າ, ເຂດທີ່ມີເດັກ ຫຼື ນັກຮຽນຂາດສານອາຫານ, ເຂດທີ່ຍັງບໍ່ທັນບັນລຸຕົວຊີ້ບອກທາງການສຶກສາ, ເຂດຈຸດສຸມພັດທະນາ ຂອງລັດຖະບານ ແລະ ຂະແໜງການສຶກສາທິການ ແລະ ກິລາ.

**ມາດຕາ 9 ການຄັດເລືອກເປົ້າໝາຍສິ່ງເສີມອາຫານທ່ຽງໃນໂຮງຮຽນ**

ການຄັດເລືອກເປົ້າໝາຍສິ່ງເສີມອາຫານທ່ຽງໃນໂຮງຮຽນ ມີດັ່ງນີ້:

1. ເກັບກຳຂໍ້ມູນ, ວິເຄາະຂໍ້ມູນ ແລະ ຄັດເລືອກຕາມເງື່ອນໄຂ ທີ່ກຳນົດໄວ້ໃນມາດຕາ 8 ຂອງດຳລັດສະບັບນີ້;

2. ອົງການຄຸ້ມຄອງ ແລະ ກວດກາ ວຽກງານສິ່ງເສີມອາຫານທ່ຽງໃນໂຮງຮຽນ ແຕ່ລະຂັ້ນ ຄົ້ນຄວ້າ, ພິຈາລະນາ ແລະ ນຳສະເໜີ ລາຍຊື່ໂຮງຮຽນທີ່ຈະໄດ້ຮັບຕາມແຜນແບ່ງປັນໃນແຕ່ລະສົກປີ.

## ໝວດທີ 4
## ການສ້າງແຜນການ

**ມາດຕາ 10 ການສ້າງແຜນການສິ່ງເສີມອາຫານທ່ຽງໃນໂຮງຮຽນ**

ໂຮງຮຽນທີ່ຖືກຄັດເລືອກ ສົມທົບກັບຄະນະພັດທະນາການສຶກສາຂັ້ນບ້ານ ສ້າງແຜນສິ່ງເສີມອາຫານທ່ຽງໃນໂຮງຮຽນ ແລະ ຄວາມຕ້ອງການດ້ານງົບປະມານ ໃນແຕ່ລະໄລຍະ ເພື່ອນຳສະເໜີຫ້ອງການສຶກສາທິການ ແລະ ກິລາ ຂັ້ນເມືອງ ພິຈາລະນາ ຕາມລະບຽບການ.

ຫ້ອງການສຶກສາທິການ ແລະ ກິລາ ຂັ້ນເມືອງ ສ້າງແຜນການ ແລະ ຄວາມຕ້ອງການດ້ານງົບປະມານ ເພື່ອສິ່ງເສີມອາຫານທ່ຽງໃນໂຮງຮຽນພາຍໃນເມືອງຂອງຕົນ ໃນແຕ່ລະໄລຍະ ແລ້ວນຳສະເໜີພະແນກສຶກສາທິການ ແລະ ກິລາ ຂັ້ນແຂວງ ພິຈາລະນາ ຕາມລະບຽບການ.

ພະແນກສຶກສາທິການ ແລະ ກິລາ ຂັ້ນແຂວງ ສ້າງແຜນການ ແລະ ຄວາມຕ້ອງການດ້ານງົບປະມານ ເພື່ອສິ່ງເສີມອາຫານທ່ຽງໃນໂຮງຮຽນ ພາຍໃນແຂວງຂອງຕົນ ໃນແຕ່ລະໄລຍະ ແລ້ວນຳສະເໜີກະຊວງສຶກສາທິການ ແລະ ກິລາ ພິຈາລະນາ ຕາມລະບຽບການ.

ກະຊວງສຶກສາທິການ ແລະ ກິລາ ສ້າງແຜນການ ແລະ ຄວາມຕ້ອງການດ້ານງົບປະມານຂອງຂັ້ນແຂວງ ໃນແຕ່ລະໄລຍະ ເພື່ອພິຈາລະນາຮັບຮອງ.

**ມາດຕາ 11 ການຮັບຮອງແຜນການສິ່ງເສີມອາຫານທ່ຽງໃນໂຮງຮຽນ**

ກະຊວງສຶກສາທິການ ແລະ ກິລາ ພິຈາລະນາ ແຜນການສິ່ງເສີມອາຫານທ່ຽງໃນໂຮງຮຽນ ແຕ່ລະໄລຍະ ຕາມການສະເໜີ ຂອງພະແນກສຶກສາທິການ ແລະ ກິລາ ຂັ້ນແຂວງ ເພື່ອກຳນົດເຂົ້າໃນແຜນພັດທະນາ ຂອງຂະແໜງການສຶກສາທິການ ແລະ ກິລາ ໃນແຕ່ລະໄລຍະ ແລະ ນຳສະເໜີລັດຖະບານ ພິຈາລະນາຮັບຮອງ.

## ໝວດທີ 5
## ທຶນທີ່ນຳໃຊ້ເຂົ້າໃນການສິ່ງເສີມອາຫານທ່ຽງ

**ມາດຕາ 12 ແຫຼ່ງທຶນ**

ແຫຼ່ງທຶນ ທີ່ນຳໃຊ້ເຂົ້າໃນວຽກງານສິ່ງເສີມອາຫານທ່ຽງໃນໂຮງຮຽນ ໄດ້ມາຈາກ:

1. ງົບປະມານຂອງລັດ ທີ່ສະໜອງໃນການຈັດຊື້ອາຫານ ຕ່ຳສຸດ 1.000 ກີບ ຕໍ່ຄົນຕໍ່ວັນ ຄິດໄລ່ ໜຶ່ງຮ້ອຍເຈັດສິບຫ້າ ວັນເຂົ້າຮຽນ ຕໍ່ປີ;

2. ທຶນສະໜັບສະໜູນຈາກບັນດາຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ;

3. ການປະກອບສ່ວນຈາກ ພໍ່ແມ່ ຫຼື ຜູ້ປົກຄອງນັກຮຽນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

4. ແຫຼ່ງທຶນອື່ນ ທີ່ຖືກຕ້ອງຕາມກົດໝາຍ.

### ມາດຕາ 13 ການຄຸ້ມຄອງ ແລະ ນຳໃຊ້ທຶນ

ການຄຸ້ມຄອງ ແລະ ນຳໃຊ້ທຶນ ຕ້ອງຮັບປະກັນຄວາມໂປ່ງໃສ, ສາມາດກວດສອບໄດ້ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ.

ທຶນໃຫ້ນຳໃຊ້ເຂົ້າໃນວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນເທົ່ານັ້ນ.

ສຳລັບລາຍລະອຽດໃນການຄຸ້ມຄອງ ແລະ ນຳໃຊ້ທຶນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 6
## ການປະເມີນ ແລະ ການຢຸດຕິການສະໜອງທຶນ

### ມາດຕາ 14 ການປະເມີນວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ

ການປະເມີນວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ແມ່ນ ການຕີລາຄາສະພາບການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນໄລຍະຜ່ານມາ ແລະ ຄາດຄະເນຜົນກະທົບ ທີ່ອາດຈະເກີດຂຶ້ນ;

ຂະແໜງການສຶກສາທິການ ແລະ ກິລາ ປະເມີນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຢ່າງເປັນລະບົບຕໍ່ເນື່ອງ ເພື່ອນຳໃຊ້ເຂົ້າໃນການວາງແຜນ ການຈັດຕັ້ງປະຕິບັດວຽກງານແຕ່ລະໄລຍະ ແລະ ການຢຸດຕິການສະໜອງທຶນສົ່ງເສີມອາຫານທ່ຽງໃນໂຮງຮຽນ.

### ມາດຕາ 15 ການຢຸດຕິການສະໜອງທຶນ

ການຢຸດຕິການສະໜອງທຶນສົ່ງເສີມອາຫານທ່ຽງໃນໂຮງຮຽນ ມີ ດັ່ງນີ້:

1. ໂຮງຮຽນ, ພໍ່ແມ່ ຫຼື ຜູ້ປົກຄອງ ແລະ ຊຸມຊົນ ທີ່ມີຄວາມພ້ອມໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ດ້ວຍທ່າແຮງຂອງຊຸມຊົນ, ການສະໜັບສະໜູນຈາກ ພໍ່ແມ່ ຫຼື ຜູ້ປົກຄອງນັກຮຽນ ແລະ ອົງການຈັດຕັ້ງອື່ນ ໂດຍຜ່ານການປະເມີນ ແລະ ຢັ້ງຢືນ ຈາກອົງການຄຸ້ມຄອງ ແລະ ກວດກາແຕ່ລະຂັ້ນ ແລະ ໄດ້ຮັບການເຫັນດີຈາກ ກະຊວງສຶກສາທິການ ແລະ ກິລາ;

2. ໂຮງຮຽນ, ພໍ່ແມ່ ຫຼື ຜູ້ປົກຄອງ ແລະ ຊຸມຊົນ ບໍ່ມີຄວາມຮັບຜິດຊອບເປັນເຈົ້າການໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມອາຫານທ່ຽງ ໂດຍຜ່ານການປະເມີນ ແລະ ຢັ້ງຢືນຈາກອົງການຄຸ້ມຄອງ ແລະ ກວດກາແຕ່ລະຂັ້ນ ແລະ ໄດ້ຮັບການເຫັນດີຈາກກະຊວງສຶກສາທິການ ແລະ ກິລາ;

3. ການນຳໃຊ້ທຶນ ແລະ ສະຫຼຸບລາຍງານ ໂດຍບໍ່ຖືກຕາມລະບຽບການ ການເງິນ.

## ໝວດທີ 7
## ຂໍ້ຫ້າມ

### ມາດຕາ 16 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກ, ຂັດຂວາງ, ເມີນເສີຍ, ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່ ຕໍ່ການເຄື່ອນໄຫວວຽກງານຂອງພະນັກງານທີ່ກ່ຽວຂ້ອງ;

2. ໂຄສະນາ, ເຜີຍແຜ່ ຫຼື ສະໜອງຂໍ້ມູນ ທີ່ບິດເບືອນຄວາມຈິງ ກ່ຽວກັບ ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

3. ໃຫ້ ຫຼື ຮັບ, ຈຳໜ່າຍ ແລະ ແຈກຢາຍ ອາຫານທີ່ບໍ່ປອດໄພຕໍ່ສຸຂະພາບ ແລະ ພັດທະນາການ ຂອງເດັກ;

4. ນຳເອົາອາຫານ, ວັດຖຸ ແລະ ອຸປະກອນ ໃນການປຸງແຕ່ງ ໄປໃຊ້ສ່ວນຕົວ;

5. ເຂົ້າຮ່ວມໃນການປຸງແຕ່ງ ແລະ ແຈກຢາຍອາຫານ ຖ້າຫາກເປັນຜູ້ຕິດເຊື້ອພະຍາດຕິດຕໍ່;

6. ນຳໃຊ້ ເຄື່ອງປຸງແຕ່ງອາຫານ, ພືດຜັກ, ປາ ແລະ ຊີ້ນ ທີ່ບໍ່ຖືກຕາມຫຼັກໂພຊະນາການ ມາປຸງແຕ່ງເປັນອາຫານທ່ຽງໃນໂຮງຮຽນ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 17 ຂໍ້ຫ້າມ ສຳລັບພະນັກງານລັດ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມພະນັກງານລັດ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ;

2. ນຳໃຊ້ທຶນ ເຂົ້າໃນການເຄື່ອນໄຫວວຽກງານອື່ນ ທີ່ບໍ່ກ່ຽວຂ້ອງກັບການຈັດຊື້ອາຫານ;

3. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ, ກົດໜ່ວງ, ຖ່ວງດຶງ ຫຼື ທຳລາຍເອກະສານທີ່ພົວພັນກັບການສົ່ງເສີມອາຫານທ່ຽງໃນໂຮງຮຽນ;

4. ປົກປິດ, ຊ່ວຍເຫຼືອ ແລະ ສົມຮູ້ຮ່ວມຄິດ ກັບຜູ້ປຸງແຕ່ງອາຫານ ທີ່ບໍ່ມີຄວາມປອດໄພ;

5. ຂໍເອົາ, ຮຽກເອົາ, ທວງເອົາ, ໃຫ້ ຫຼື ຮັບ ສິນບົນ;

6. ນຳໃຊ້ ເຄື່ອງປຸງແຕ່ງອາຫານ, ພືດຜັກ, ປາ ແລະ ຊີ້ນ ທີ່ບໍ່ຖືກຕາມຫຼັກໂພຊະນາການ;

7. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ການຄຸ້ມຄອງ ແລະ ກວດກາ ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ

**ມາດຕາ 18 ອົງການຄຸ້ມຄອງ**

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ ແລະ ກວດກາ ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ປະກອບດ້ວຍ:

1. ກະຊວງສຶກສາທິການ ແລະ ກິລາ;

2. ພະແນກສຶກສາທິການ ແລະ ກິລາ ຂັ້ນແຂວງ;

3. ຫ້ອງການສຶກສາທິການ ແລະ ກິລາ ຂັ້ນເມືອງ;

4. ສະຖານການສຶກສາກ່ອນໄວຮຽນ, ສາມັນສຶກສາ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງກະຊວງສຶກສາທິການ ແລະ ກິລາ**

ກະຊວງສຶກສາທິການ ແລະ ກິລາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ເພື່ອນຳສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ເປັນແຜນການ, ແຜນງານ, ໂຄງການ, ລະບຽບການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ແລະ ລະບຽບການ;

4. ຊຸກຍູ້, ຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

5. ສັງລວມ ແລະ ເກັບກຳຂໍ້ມູນ ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ໃນຂອບເຂດທົ່ວປະເທດ;

6. ສ້າງຂີດຄວາມສາມາດ, ຍົກລະດັບ ໃຫ້ແກ່ບຸກຄະລາກອນ ກ່ຽວກັບວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

7. ອອກ, ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ກ່ຽວກັບ ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

8. ຮັບ ແລະ ແກ້ໄຂ ຄຳສະເໜີ ຫຼື ຂໍ້ຂັດແຍ່ງ ກ່ຽວກັບ ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

9. ປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

10. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ຕາມການມອບໝາຍ ຫຼື ການຕົກລົງຈາກລັດຖະບານ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ລັດຖະບານຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງພະແນກສຶກສາທິການ ແລະ ກິລາ ຂັ້ນແຂວງ**

ພະແນກສຶກສາທິການ ແລະ ກິລາ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ແລະ ລະບຽບການ ກ່ຽວກັບວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ແລະ ລະບຽບການ;

3. ຊຸກຍູ້, ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

4. ສັງລວມ ແລະ ເກັບກຳຂໍ້ມູນ ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

5. ສ້າງຂີດຄວາມສາມາດ, ຍົກລະດັບ ໃຫ້ແກ່ບຸກຄະລາກອນ ກ່ຽວກັບວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

6. ປຸກລະດົມ, ຂົນຂວາຍ ແລະ ນຳພາຊຸມຊົນ ໃນການມີສ່ວນຮ່ວມ ແລະ ປະກອບສ່ວນ ທຶນ, ອາຫານ, ວັດຖຸ, ອຸປະກອນ ແລະ ສິ່ງອື່ນ;

7. ຮັບ ແລະ ແກ້ໄຂ ຄຳສະເໜີ ຫຼື ຂໍ້ຂັດແຍ່ງ ກ່ຽວກັບ ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

8. ປະສານສົມທົບກັບພະແນກການ, ຫ້ອງການ ແລະ ອົງການການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

9. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ຕາມການມອບໝາຍຂອງຂັ້ນເທິງ;

10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ກະຊວງສຶກສາທິການ ແລະ ກິລາ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງຫ້ອງການສຶກສາທິການ ແລະ ກິລາ ຂັ້ນເມືອງ.**

ຫ້ອງການສຶກສາທິການ ແລະ ກິລາ ຂັ້ນເມືອງ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ກົດໝາຍ, ແຜນການ, ແຜນງານ, ໂຄງການ ແລະ ລະບຽບການ ກ່ຽວກັບວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ແລະ ລະບຽບການ;

3. ຊຸກຍູ້, ຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

4. ສັງລວມ ແລະ ເກັບກຳຂໍ້ມູນ ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

5. ສ້າງຂີດຄວາມສາມາດ, ຍົກລະດັບ ໃຫ້ແກ່ບຸກຄະລາກອນ ກ່ຽວກັບວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

6. ປຸກລະດົມ, ຂົນຂວາຍ ແລະ ນຳພາຊຸມຊົນ ໃນການມີສ່ວນຮ່ວມ ແລະ ປະກອບສ່ວນ ທຶນ, ອາຫານ, ວັດຖຸປະກອນ ແລະ ສິ່ງອື່ນ;

7. ຮັບ ແລະ ແກ້ໄຂ ຄຳສະເໜີ ຫຼື ຂໍ້ຂັດແຍ່ງ ກ່ຽວກັບ ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

8. ປະສານສົມທົບກັບຫ້ອງການ, ສະຖານການສຶກສາ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ພະແນກສຶກສາທິການ ແລະ ກິລາ ຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 22 ສິດ ແລະ ໜ້າທີ່ ສະຖານການສຶກສາກ່ອນໄວຮຽນ, ສາມັນສຶກສາ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ**

ສະຖານການສຶກສາກ່ອນໄວຮຽນ, ສາມັນສຶກສາ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ກົດໝາຍ ແຜນການ, ແຜນງານ, ໂຄງການ ແລະ ລະບຽບການ ກ່ຽວກັບວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

2. ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ແລະ ລະບຽບການ;

3. ສັງລວມ ແລະ ເກັບກຳຂໍ້ມູນ ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

4. ປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

5. ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກ່ຽວກັບວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

6. ປຸກລະດົມ, ຂົນຂວາຍ ແລະ ນຳພາຊຸມຊົນ ໃນການມີສ່ວນຮ່ວມ ແລະ ປະກອບສ່ວນ ທຶນ, ອາຫານ, ວັດຖຸ, ອຸປະກອນ ແລະ ສິ່ງອື່ນ;

7. ສະເໜີ ໂຮງຮຽນເປົ້າໝາຍໃໝ່ ແລະ ການຢຸດຕິ ການສະໜອງງົບປະມານອາຫານທ່ຽງໃນໂຮງຮຽນ;

8. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວ ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການສຶກສາທິການ ແລະ ກິລາ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ.

**ມາດຕາ 24 ເນື້ອໃນກວດກາ**

ການກວດກາວຽກງານອາຫານທ່ຽງໃນໂຮງຮຽນ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

2. ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ກ່ຽວກັບວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

3. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ.

**ມາດຕາ 25 ຮູບການ ການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີແຈ້ງການໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ການກວດກາໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 26 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 27 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ກໍລະນີ ເບົາ ຫຼື ໜັກ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 28 ການຈັດຕັ້ງປະຕິບັດ**

ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 29 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 15 ສິງຫາ 2022 ເປັນຕົ້ນໄປ.

ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ